**ສາມາດອອກຂ່າວໄດ້ທັນທີ**

# ເວທີປະຊຸມເປີດກວ້າງ ຂອງ ຄມສ ເພື່ອສົນທະນາກ່ຽວກັບ ບັນຫາທ້າທາຍຂອງ ການພັດທະນາ ແລະ ເພື່ອຊອກຫາທາງອອກຮ່ວມກັນ

**ທີ່ນະຄອນຫຼວງວຽງຈັນ, ສປປ ລາວ, ວັນທີ 18 ພະຈິກ 2022** — ໃນໄວໆນີ້ ຄະນະກຳມາທິການແມ່ນ້ຳຂອງສາກົນ ຈະເປັນເຈົ້າພາບຈັດ ກອງປະຊຸມພາກສ່ວນກ່ຽວຂ້ອງລະດັບພາກພື້ນ ຄັ້ງທີ 13 ເຊິ່ງໃນນັ້ນ ຄມສ ຈະບໍ່ພຽງແຕ່ໃຫ້ຂໍ້ມູນໃໝ່ໆ ກ່ຽວກັບ ບັນດາໂຄງການພະລັງງານທາງນ້ຳ ລຽບຕາມແມ່ນ້ຳ ທີ່ໃຫຍ່ທີ່ສຸດຂອງອາຊີຕາເວັນອອກ ເທົ່ານັ້ນ ແຕ່ຍັງຈະສະແດງໃຫ້ເຫັນເຖິງ ການຮ່ວມມືອັນເລິກເຊິ່ງກັບ ບັນດານັກເຄື່ອນໄຫວ ຜູ້ທີ່ເຄື່ອນໄຫວ ເພື່ອຮັກສາຜົນປະໂຫຍດໃຫ້ ຄອບຄົວປະມົງ ແລະ ຄອບຄົວກະສິກອນ ຫຼາຍລ້ານຄອບຄົວ ໃນແມ່ນ້ຳຂອງ.

ກອງປະຊຸມຄັ້ງວັນທີ 12-13 ທັນວານີ້ ແມ່ນຈະໄດ້ຈັດຂຶ້ນທີ່ ນະຄອນໂຮຈິມິນ ປະເທດຫວຽດນາມ ແລະ ຈະຖ່າຍທອດອອນລາຍ ໄປພ້ອມໆກັນ. ງານໜຶ່ງວັນເຄິ່ງນີ້ ຈະເປີດໂອກາດໃຫ້ປຶກສາຫາລື ບັນຫາທ້າທາຍຫຼາຍຢ່າງ ທີ່ອ່າງແມ່ນ້ຳແຫ່ງນີ້ ກຳລັງປະສົບພົບພໍ້ຢູ່ ພ້ອມທັງ ສະເໜີທາງອອກຕ່າງໆ ນັບຈາກການສ້າງຄວາມສົມດູນດ້ານ ການຂະຫຍາຍຕົວທາງເສດຖະກິດ ທີ່ເກີດຈາກ ການພັດທະນາຊັບພະຍາກອນນ້ຳ ໄປຈົນເຖິງ ການຫຼຸດຜ່ອນຜົນກະທົບໃດໜຶ່ງ ຕໍ່ກັບລະບົບນິເວດ ຫຼື ຕໍ່ກັບ ຊຸມຊົນແຄມຝັ່ງນ້ຳ ແລະ ການຮັບມືກັບ ຄວາມເສຍຫາຍທີ່ເກີດຈາກມະນຸດ ແລະ ເກີດຈາກການປ່ຽນແປງສະພາບອາກາດ.

ບັນດາຜູ້ເຂົ້າຮ່ວມ ບໍ່ພຽງແຕ່ຈະໄດ້ຮັບຟັງຂໍ້ມູນໃໝ່ໆ ກ່ຽວກັບ ບັນດາເຂື່ອນພະລັງງານທາງນ້ຳ ລຽບຕາມແມ່ນ້ຳຂອງເທົ່ານັ້ນ ແຕ່ພວກເຂົາຈະມີໂອກາດ ແລກປ່ຽນມຸມມອງ, ບັນຫາ ແລະ ຄວາມຄິດເຫັນຕ່າງໆ ນຳອີກ. ນອກຈາກນັ້ນແລ້ວ, ບັນດາອົງການຈັດຕັ້ງສັງຄົມ ກໍ່ກຳລັງຮ່ວມກັນ ກຳນົດ ວາລະຂອງກອງປະຊຸມວັນທີສອງ ເຊິ່ງນັ້ນເປັນສັນຍານສະແດງໃຫ້ເຫັນວ່າ ບັນດາອົງການຈັດຕັ້ງເຫລົ່ານີ້ໄດ້ປະກອບສ່ວນຫລາຍຂຶ້ນ ໃນການກຳນົດບູລິມະສິດຕ່າງໆຂອງ ຄມສ. ນອກຈາກນັ້ນແລ້ວ ມັນກໍ່ຍັງສະທ້ອນໃຫ້ເຫັນເຖິງ ຄວາມມຸ່ງຫວັງຂອງ ຄມສ ໃນການກະຕຸກຊຸກຍູ້ ໃຫ້ໄດ້ຮັບຄຳຄິດເຫັນທີ່ກວ້າງຂວາງທີ່ສຸດ ແລະ ລົງເລິກການຮ່ວມມືກັບ ບັນດາອົງການຈັດຕັ້ງສັງຄົມ, ກ່າວໂດຍ ຫົວໜ້າກອງເລຂາ ຄມສ ທ່ານ ດຣ. ອານຸລັກ ກິດຕິຄຸນ.

“ທ່ານຄົນດຽວ ບໍ່ສາມາດເຮັດໃຫ້ດີຂຶ້ນໄດ້ ແຕ່ຕ້ອງຮ່ວມກັນ,” ກ່າວໂດຍທ່ານ ອານຸລັກ. “ແມ່ນ້ຳຂອງ ເປັນຂອງທຸກຄົນ, ສະນັ້ນ ມັນເປັນຄວາມຮັບຜິດຊອບຮ່ວມກັນ ຂອງພວກເຮົາ ທີ່ຕ້ອງບໍ່ພຽງແຕ່ ພັດທະນາແມ່ນ້ຳແຫ່ງນີ້ ເທົ່ານັ້ນ ແຕ່ຕ້ອງປົກປ້ອງມັນນຳອີກ”.

ງານທີ່ມີຊື່ວ່າ “ທາງອອກທີ່ສ້າງຂຶ້ນມາຮ່ວມກັນ ສຳລັບອ່າງແມ່ນ້ຳທີ່ອຸດົມສົມບູນ” ເປັນງານທີ່ເປັນສ່ວນໜຶ່ງຂອງພາລະກິດຂອງ ຄມສ ເພື່ອໃຫ້ອົງການລະຫວ່າງລັດຖະບານນີ້ - ເຊິ່ງປະກອບດ້ວຍ ປະເທດກຳປູເຈຍ, ປະເທດລາວ, ປະເທດໄທ ແລະ ປະເທດຫວຽດນາມ - ໄດ້ເຮັດໜ້າທີ່ເປັນ “ສູນກາງຄວາມຮູ້” ທີ່ໂປ່ງໃສ ແລະ ອຳນວຍຄວາມສະດວກໃຫ້ ກົນໄກ “ການທູດທາງນ້ຳ”.

ນອກຈາກ ບັນດາພະນັກງານຂອງ ຄມສ ແລະ ບັນດາຜູ້ຕາງໜ້າລັດຖະບານ ທີ່ຈະເຂົ້າຮ່ວມໃນ ກອງປະຊຸມພາກສ່ວນກ່ຽວຂ້ອງລະດັບພາກພື້ນ ຄັ້ງທີ 13 ນີ້ແລ້ວ, ບັນດາຜູ້ເຂົ້າຮ່ວມອື່ນໆ ກໍ່ຈະປະກອບດ້ວຍ ບັນດາຜູ້ພັດທະນາໂຄງການພະລັງງານທາງນ້ຳ, ຄູ່ຮ່ວມງານສາກົນ, ນັກຄົ້ນຄວ້າ, ນັກເຄື່ອນໄຫວທີ່ບໍ່ສັງກັດລັດຖະບານ ແລະ ບັນດາຜູ້ຕາງໜ້າຊຸມຊົນແຄມຝັ່ງນ້ຳ.

ເຖິງແມ່ນວ່າ ໃນໄລຍະຜ່ານມານັ້ນ ຄມສ ອາດຈະຖືກເບິ່ງວ່າເປັນ "ຝ່າຍກົງກັນຂ້າມ" ແຕ່ວ່າ ໃນຊຸມປີຜ່ານມານີ້ ຄມສ ໄດ້ພະຍາຍາມ ສ້າງພື້ນທີ່ເພື່ອ ສ້າງຄວາມເຂົ້າໃຈອັນດຽວກັນ, ໃຫ້ພາກສ່ວນກ່ຽວຂ້ອງ ເຂົ້າມີສ່ວນຮ່ວມ ແລະ ຂະຫຍາຍສຽງໃນທຸກໆດ້ານ.

ທ່ານ ອານຸລັກ ສືບຕໍ່ກ່າວອີກວ່າ: "ຂ້າພະເຈົ້າຮູ້ສຶກຕື່ນເຕັ້ນ ທີ່ຈະໄດ້ເປີດກວ້າງການມີສ່ວນຮ່ວມຢ່າງເລິກເຊິ່ງກວ່າເກົ່າ". "ພວກເຮົາຮັບຮູ້ເຖິງ ຄວາມຈຳເປັນໃນການສ້າງ ຄວາມເຊື່ອໝັ້ນ ແລະ ຄວາມໄວ້ວາງໃຈ ຍ້ອນວ່າພວກທ່ານ ຈະບໍ່ສາມາດເຮັດວຽກຮ່ວມກັນໄດ້ ຖ້າຫາກບໍ່ມີຄວາມເຊື່ອໝັ້ນກັນ ແລະ ບໍ່ເຂົ້າໃຈເຖິງບັນຫາທ້າທາຍ ທີ່ແຕ່ລະຝ່າຍປະສົບພົບພໍ້ຢູ່. ຫຼັງຈາກນັ້ນ ກໍ່ເຮັດວຽກຮ່ວມກັນ ເພື່ອແກ້ໄຂບັນຫາທ້າທາຍເລົ່ານັ້ນ ສຳລັບແມ່ນ້ຳພຽງໜຶ່ງດຽວຂອງພວກເຮົາ".

ໃນຈຳນວນລາຍການວາລະກອງປະຊຸມ ທີ່ສຳຄັນນັ້ນ ກໍ່ແມ່ນເພື່ອໃຫ້ ບັນດາຜູ້ເຂົ້າຮ່ວມກອງປະຊຸມ ໄດ້ຮັບຮູ້ກ່ຽວກັບຜົນໄດ້ຮັບໃນເບື້ອງຕົ້ນຈຳນວນໜຶ່ງ ຈາກ "ບົດສຶກສາຮ່ວມ" ທີ່ສຳຄັນ ລະຫວ່າງ ຄມສ ແລະ ສູນກາງການຮ່ວມມືດ້ານນ້ຳແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ ຕາງໜ້າໃຫ້ 6 ປະເທດແຄມຝັ່ງ ແມ່ນ້ຳຂອງ-ແມ່ນ້ຳລ້ານຊ້າງ. ບົດສຶກສາຮ່ວມ ສະບັບນີ້ ໄດ້ເປີດຕົວເຜີຍແຜ່ໃນເດືອນມິຖຸນາ ໃນລະຫວ່າງ ກອງປະຊຸມພາກສ່ວນກ່ຽວຂ້ອງລະດັບພາກພື້ນ ຄັ້ງທີ 12 ໂດຍມີເປົ້າໝາຍເພື່ອສ້າງຄວາມເຂົ້າໃຈ ກ່ຽວກັບ ຮູບແບບການໄຫຼຂອງນ້ຳ ທີ່ກຳລັງປ່ຽນໄປ ອັນເນື່ອງມາຈາກ ສະພາບອາກາດ ແລະ ການພັດທະນາ, ພ້ອມທັງ ເພື່ອສົ່ງເສີມ ການແລກປ່ຽນຂໍ້ມູນກ່ຽວກັບ ຜົນກະທົບຈາກ ການປະຕິບັດງານໃນອ່າງເກັບນ້ຳ ຕໍ່ກັບ ປະລິມານນ້ຳໄຫຼໃນແມ່ນ້ຳຂອງ, ການປ່ອຍນ້ຳ ແລະ ຄຸນນະພາບນ້ຳ, ແລະເພື່ອຊອກຫາທາງອອກ ເພື່ອຫຼຸດຜ່ອນ ແລະ ປັບຕົວເຂົ້າກັບ ຜົນກະທົບນັ້ນ. ຂໍ້ມູນດັ່ງກ່າວນີ້ ຍັງສາມາດນຳໃຊ້ເພື່ອການແຈ້ງເຕືອນລ່ວງໜ້າ ໃຫ້ບັນດາປະເທດ ແລະ ຊຸມຊົນຕ່າງໆ ໃນເຂດລຸ່ມນ້ຳ ເຊິ່ງຈະຊ່ວຍພວກເຂົາ ໃຫ້ສາມາດວາງແຜນໃຫ້ສອດຄ່ອງກັບ ການປ່ຽນແປງໃດໜຶ່ງ ຫຼື ເພື່ອສວຍໃຊ້ໂອກາດໃດໜຶ່ງ.

ຫົວຂໍ້ອື່ນໆໃນວາລະກອງປະຊຸມຄັ້ງນີ້ ຈະປະກອບດ້ວຍ: ເຄືອຂ່າຍຕິດຕາມແມ່ນ້ຳຫຼັກ ຂອງ ຄມສ ເຮັດວຽກຄືແນວໃດເພື່ອປົກປ້ອງ ຄວາມອຸດົມສົມບູນຂອງແມ່ນ້ຳຂອງ; ຂໍ້ມູນໃໝ່ໆ ກ່ຽວກັບ ໂຄງການພະລັງງານທາງນ້ຳ ຫຼາຍແຫ່ງເຊິ່ງຮວມທັງ ໂຄງການດອນສະໂຮງ, ໂຄງການຊະນະຄາມ, ໂຄງການເຊກອງ A ແລະ ໂຄງການພູງອຍ ທີ່ຫາກໍ່ສະເໜີຂຶ້ນມາ; ການພັດທະນາພະລັງງານທາງນ້ຳ ກະທົບຄືແນວໃດ ຕໍ່ກັບການປະມົງ ແລະ ການຫາລ້ຽງຊີວິດ ເຊິ່ງຮວມທັງ ມາດຕະການຫຼຸດຜ່ອນ, ແຫຼ່ງລາຍຮັບທາງເລືອກ ແລະ ຮູບແບບອື່ນໆຂອງ "ການໃຊ້ຊີວິດຢ່າງຍືນຍົງ"; ແລະ ເຮັດແນວໃດເພື່ອສົ່ງເສີມ ການຮ່ວມງານລະຫວ່າງ ຄມສ, ອົງການຈັດຕັ້ງສັງຄົມ ແລະ ຂະແໜງການເອກະຊົນ. ເວົ້າສະເພາະແລ້ວ ກໍ່ແມ່ນການເຮັດແນວໃດ ເພື່ອເຮັດໃຫ້ ການຕັດສິນໃຈ ມີສ່ວນຮ່ວມຫຼາຍຂຶ້ນ ກັບບັນດາໂຄງການຕ່າງໆ ທີ່ເຈາະຈົງໃນທາງດ້ານ ການສົ່ງເສີມ ຄວາມຫຼາກຫຼາຍທາງເພດ ແລະ ຄວາມສະເໝີພາບທາງເພດ.

ບັນດາຜູ້ທີ່ສົນໃຈເຂົ້າຮ່ວມ ສາມາດລົງທະບຽນອອນລາຍໄດ້ທີ່:
https://forms.gle/7BCj7zEphsjXaAHK7

ການລົງທະບຽນ ຈະປິດໃນວັນທີ 2 ທັນວານີ້. ມີການຊ່ວຍເຫຼືອທາງດ້ານການເງິນ ຈຳນວນໜ້ອຍໜຶ່ງ ໃຫ້ຜູ້ເຂົ້າຮ່ວມ ທີ່ມີຄວາມຈຳເປັນຢ່າງຈະແຈ້ງ. ບັນດາຜູ້ເຂົ້າຮ່ວມ ຍັງສາມາດເບິ່ງຖ່າຍທອດສົດ ກອງປະຊຸມພາກສ່ວນກ່ຽວຂ້ອງລະດັບພາກພື້ນ ຄັ້ງທີ 13 ນີ້ ໃນທຸກໆຊ່ອງທາງສັງຄົມອອນລາຍຂອງ ຄມສ: ເຟສບຸກ, ທະວິດເຕີ້, ລິ້ງອິນ ແລະ ຢູທູບ.

**ຂໍ້ມູນສໍາລັບບັນນາທິການຂ່າວ:**

ຄມສ ແມ່ນອົງການຈັດຕັ້ງ ລະຫວ່າງລັດຖະບານ ເພື່ອການປຶກສາຫາລື ແລະ ການຮ່ວມມືລະດັບພາກພື້ນ ໃນອ່າງແມ່ນໍ້າຂອງຕອນລຸ່ມ. ສ້າງຕັ້ງຂຶ້ນໃນປີ 1995 ຕາມສັນຍາແມ່ນໍ້າຂອງ ລະຫວ່າງ ປະເທດກໍາປູເຈຍ, ປະເທດລາວ, ປະເທດໄທ ແລະ ປະເທດຫວຽດນາມ. ອົງການດັ່ງກ່າວນີ້ ເຮັດໜ້າທີ່ເປັນກົນໄກລະດັບພາກພື້ນ ເພື່ອການຮ່ວມມື ກ່ຽວກັບນໍ້າ ແລະ ທັງເປັນສູນກາງຄວາມຮູ້ ກ່ຽວກັບ ການຄຸ້ມຄອງຊັບພະຍາກອນນໍ້າ ເພື່ອການພັດທະນາຢ່າງຍືນຍົງ ໃນພາກພື້ນນີ້.

**-ຈົບ-**

**ຖ້າຕ້ອງການຂໍ້ມູນເພີ້ມຕື່ມ, ກະລຸນາຕິດຕໍ່:**
ທ່ານ ໂສພຽກ ແມ, ຜູ້ຊ່ຽວຊານດ້ານ ການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງ, ຮັກສາການ ພະນັກງານປະຊາສໍາພັນ ກອງເລຂາ ຄະນະກໍາມາທິການແມ່ນໍ້າຂອງສາກົນ
ອີເມວ: sopheak@mrcmekong.org
ມືຖື: +856-20-77779168

###